ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ປະທານປະເທດ

ເລກທີ 288 /ປປທ

ນະຄອນຫຼວງວຽງຈັນ, ວັນທີ 08 ທັນວາ 2017

# ລັດຖະດຳລັດ
# ຂອງປະທານປະເທດ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

### ກ່ຽວກັບການປະກາດໃຊ້ກົດໝາຍ ວ່າດ້ວຍອົງການກາແດງລາວ

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ໝວດທີ VI ມາດຕາ 67 ຂໍ້ 1;
- ອີງຕາມ ມະຕິຂອງກອງປະຊຸມສະພາແຫ່ງຊາດ ສະບັບເລກທີ 060/ສພຊ, ລົງວັນທີ 31 ຕຸລາ 2017 ກ່ຽວກັບການຮັບຮອງເອົາກົດໝາຍ ວ່າດ້ວຍອົງການກາແດງລາວ;
- ອີງຕາມ ໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 024/ຄປຈ, ລົງວັນທີ 27 ພະຈິກ 2017.

**ປະທານປະເທດ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ:**

ມາດຕາ 1 ປະກາດໃຊ້ກົດໝາຍ ວ່າດ້ວຍອົງການກາແດງລາວ.

ມາດຕາ 2 ລັດຖະດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ປະທານປະເທດ ແຫ່ງ ສປປ ລາວ**

ບຸນຍັງ ວໍລະຈິດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 060 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 31/10/17

# ມະຕິ

## ຂອງກອງປະຊຸມສະພາແຫ່ງຊາດ

## ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍອົງການກາແດງລາວ

---

ອີງຕາມລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ມາດຕາ 53 ຂໍ້ 1 ແລະ ກົດໝາຍວ່າດ້ວຍສະພາແຫ່ງຊາດ (ສະບັບປັບປຸງ ປີ 2015) ມາດຕາ 11 ຂໍ້ 1.

ພາຍຫຼັງທີ່ກອງປະຊຸມສະໄໝສາມັນ ເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ VIII ໄດ້ຄົ້ນຄວ້າພິຈາລະນາ ຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍອົງການກາແດງລາວ ໃນວາລະກອງປະຊຸມ ຄັ້ງວັນທີ 31 ຕຸລາ 2017.

### ກອງປະຊຸມສະພາແຫ່ງຊາດ ຕົກລົງ:

ມາດຕາ 1 ຮັບຮອງເອົາກົດໝາຍວ່າດ້ວຍອົງການກາແດງລາວ ດ້ວຍຄະແນນສຽງເຫັນດີເປັນສ່ວນຫຼາຍ.

ມາດຕາ 2 ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ປະທານສະພາແຫ່ງຊາດ

ປານີ ຢາທໍ່ຕູ້

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ ເລກທີ 28 /ສພຊ
ນະຄອນຫຼວງວຽງຈັນ, ວັນທີ 31 ຕຸລາ 2017

# ກົດໝາຍ
# ວ່າດ້ວຍວຽກງານກາແດງລາວ

## ພາກທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ກົດໝາຍສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງ, ການຕິດຕາມ ກວດກາ ວຽກງານກາແດງລາວ ເພື່ອເຮັດໃຫ້ວຽກງານດັ່ງກ່າວ ມີຄວາມໜັກແໜ້ນ ເຂັ້ມແຂງ, ມີປະສິດທິພາບ, ປະສິດທິຜົນ ແນໃສ່ຮັບປະກັນເຮັດໃຫ້ການຊ່ວຍເຫຼືອ ດ້ານມະນຸດສະທຳ ໄດ້ຢ່າງທັນການ, ທົ່ວເຖິງ, ສາມາດເຊື່ອມໂຍງກັບພາກພື້ນ ແລະ ສາກົນ, ປະກອບສ່ວນເຂົ້າໃນການປົກປັກຮັກສາ ແລະ ພັດທະນາປະເທດຊາດ.

**ມາດຕາ 2 ວຽກງານກາແດງລາວ**

ວຽກງານກາແດງລາວ ແມ່ນ ການຊ່ວຍເຫຼືອດ້ານມະນຸດສະທຳ, ເປັນເຄື່ອງມື ແລະ ກົນໄກໜຶ່ງ ໃນການປະຕິບັດຫຼັກການຊ່ວຍເຫຼືອຊຶ່ງກັນ ແລະ ກັນ, ສ້າງສະພາບແວດລ້ອມທີ່ມີຄວາມສົມດຸນ, ກົມກຽວ ແລະ ປອງດອງກັນໃນສັງຄົມ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ມະນຸດສະທຳ** ໝາຍເຖິງ ຄວາມເມດຕາ ສົງສານຕໍ່ເພື່ອນມະນຸດດ້ວຍກັນ;

2. **ວຽກງານມະນຸດສະທຳ** ໝາຍເຖິງ ການເຄື່ອນໄຫວຊ່ວຍເຫຼືອບັນເທົາທຸກ ທາງດ້ານວັດຖຸ ແລະ ຈິດໃຈ ເພື່ອປົກປ້ອງຊີວິດ, ສຸຂະພາບ ແລະ ເຄົາລົບສິດຂອງຄວາມເປັນມະນຸດ ລວມທັງການສົ່ງເສີມ, ພັດທະນາຄວາມຍືນຍົງຂອງມະນຸດ;

3. **ຂະບວນການກາແດງ ແລະ ຊີກວົງເດືອນແດງສາກົນ** ໝາຍເຖິງ ການເຄື່ອນໄຫວຂອງຄະນະກຳມະການກາແດງສາກົນ, ສະຫະພັນກາແດງ ແລະ ຊີກວົງເດືອນແດງສາກົນ, ອົງການກາແດງ ຫຼື ຊີກວົງເດືອນແດງແຫ່ງຊາດຕ່າງໆ;

4. **ເຈັດຫຼັກການພື້ນຖານຂອງຂະບວນການກາແດງ ແລະ ຊີກວົງເດືອນແດງສາກົນ** ໝາຍເຖິງ ຫຼັກການເຄື່ອນໄຫວອົງການກາແດງ ຄື ມີມະນຸດສະທຳ, ທ່ຽງທຳ, ເປັນກາງ, ເປັນເອກະລາດ, ສະໝັກໃຈ, ເປັນເອກະພາບ ແລະ ມີນ້ຳໃຈສາກົນ;

5. **ກາແດງ** ໝາຍເຖິງ ສັນຍາລັກກາກະບາດສີແດງ (ໝາຍບວກສີແດງ) ເປັນເຄື່ອງໝາຍ ທີ່ເປັນຕົວແທນຂອງຄວາມມີນ້ຳໃຈມະນຸດສະທຳ ເພື່ອເຮັດໜ້າທີ່ໃນການຊ່ວຍເຫຼືອສຸກເສີນເບື້ອງຕົ້ນ ແກ່ປະຊາຊົນຜູ້ປະສົບໄພພິບັດ, ຜູ້ທຸກຍາກ ແລະ ສົ່ງເສີມສຸຂະພາບຊຸມຊົນ;

6. **ຊີກວົງເດືອນແດງ** ໝາຍເຖິງ ສັນຍາລັກເຄິ່ງວົງເດືອນສີແດງ ເປັນເຄື່ອງໝາຍ ທີ່ເປັນຕົວແທນຂອງຄວາມມີນ້ຳໃຈມະນຸດສະທຳ ເພື່ອເຮັດໜ້າທີ່ໃນການຊ່ວຍເຫຼືອສຸກເສີນເບື້ອງຕົ້ນ ແກ່ປະຊາຊົນຜູ້ປະສົບໄພພິບັດ, ຜູ້ທຸກຍາກ ແລະ ສົ່ງເສີມສຸຂະພາບຊຸມຊົນ ຄືກັບເຄື່ອງໝາຍກາແດງ;

7. **ໄພພິບັດ** ໝາຍເຖິງ ໄພອັນຕະລາຍທີ່ເກີດຂຶ້ນຈາກທຳມະຊາດ ແລະ ການກະທຳຂອງມະນຸດ ເຊັ່ນ ອັກຄີໄພ, ອຸທົກກະໄພ, ວາຕະໄພ, ໄພແຫ້ງແລ້ງ, ສັດຕູພືດ, ພະຍາດລະບາດ, ອາກາດໜາວ, ດິນເຈື່ອນ, ແຜ່ນດິນໄຫວ, ສົງຄາມ, ອຸບປະຕິເຫດ;

8. **ຄວາມສ່ຽງຈາກໄພພິບັດ** ໝາຍເຖິງ ຄວາມເປັນໄປໄດ້ຂອງເຫດການໄພພິບັດໃດໜຶ່ງ ທີ່ອາດຈະເກີດຂຶ້ນ ແລະ ນຳຜົນເສຍຫາຍອັນໃຫຍ່ຫຼວງຕໍ່ສຸຂະພາບ, ຊີວິດ ແລະ ຊັບສິນ ຂອງປະຊາຊົນ;

9. **ໄພອັນຕະລາຍ** ໝາຍເຖິງ ປາກົດການ ຫຼື ສະຖານະການໃດໜຶ່ງ ຊຶ່ງມີທ່າອ່ຽງທີ່ຈະກໍ່ໃຫ້ມີການທຳລາຍ ຫຼື ສ້າງຄວາມເສຍຫາຍຕໍ່ສຸຂະພາບ, ຊີວິດ ແລະ ຊັບສິນຂອງປະຊາຊົນ;

10. **ຜູ້ຖືກເຄາະຮ້າຍ** ໝາຍເຖິງ ຜູ້ໄດ້ຮັບຜົນກະທົບທາງດ້ານ ຮ່າງກາຍ, ຊີວິດ, ຈິດໃຈ ແລະ ຊັບສິ່ງຂອງ ຈາກໄພພິບັດທາງທຳມະຊາດ ແລະ ມະນຸດສ້າງຂຶ້ນ.

**ມາດຕາ 4 ນະໂຍບາຍຂອງລັດກ່ຽວກັບອົງການກາແດງລາວ**

ລັດ ຊຸກຍູ້ ສົ່ງເສີມ ອົງການກາແດງລາວ ດ້ວຍການສະໜັບສະໜູນ, ອຳນວຍຄວາມສະດວກ ແລະ ປະກອບບຸກຄະລາກອນ, ພາຫະນະ, ອຸປະກອນ, ໂຄງລ່າງພື້ນຖານ, ງົບປະມານ ເພື່ອຮັບປະກັນການຊ່ວຍເຫຼືອດ້ານມະນຸດສະທຳ.

ລັດ ປຸກລະດົມ ທຸກພາກສ່ວນໃນສັງຄົມ ໃຫ້ປະກອບສ່ວນ ແລະ ຮ່ວມມືໃນອົງການກາແດງລາວ.

ລັດ ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳ ຂອງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ເຂົ້າຮ່ວມການເຄື່ອນໄຫວອົງການກາແດງລາວ ດ້ວຍກົດໝາຍ.

**ມາດຕາ 5 ຫຼັກການຂອງການເຄື່ອນໄຫວອົງການກາແດງ**

ການເຄື່ອນໄຫວອົງການກາແດງ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ຮັບປະກັນການປະຕິບັດ ແນວທາງ ນະໂຍບາຍ, ລັດຖະທຳມະນູນ ແລະ ກົດໝາຍ ຂອງ ສປປ ລາວ;
2. ລວມສູນ ແລະ ເປັນເອກະພາບ ໃນຂອບເຂດທົ່ວປະເທດ;
3. ເປີດເຜີຍ, ໂປ່ງໃສ, ຍຸຕິທຳ, ສາມາດກວດສອບໄດ້ ແລະ ບໍ່ຫວັງຜົນກຳໄລ;
4. ຮັບປະກັນ ເຈັດຫຼັກການພື້ນຖານຂອງຂະບວນການກາແດງ ແລະ ຊີກວົງເດືອນແດງສາກົນ;
5. ສອດຄ່ອງກັບສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

**ມາດຕາ 6 ຂອບເຂດການນຳໃຊ້ກົດໝາຍ**

ກົດໝາຍສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ເຄື່ອນໄຫວວຽກງານກາແດງ ຢູ່ ສປປ ລາວ.

**ມາດຕາ 7 ການຮ່ວມມືສາກົນ**

ລັດ ສົ່ງເສີມການພົວພັນຮ່ວມມືກັບ ຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານກາແດງ ດ້ວຍການແລກປ່ຽນ ບົດຮຽນ, ຂໍ້ມູນ ຂ່າວສານ, ວິທະຍາສາດ, ເຕັກໂນໂລຊີ ແລະ ການພັດທະນາຊັບພະຍາກອນມະນຸດ ເພື່ອເຮັດໃຫ້ວຽກງານດັ່ງກ່າວມີປະສິດທິພາບ, ປະສິດທິຜົນ, ມີການພັດທະນາ ແລະ ປະຕິບັດສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

## ພາກທີ II
## ວຽກງານກາແດງ

**ມາດຕາ 8 ການເຄື່ອນໄຫວວຽກງານກາແດງ**

ການເຄື່ອນໄຫວວຽກງານກາແດງ ແມ່ນ ຂະບວນການຈັດຕັ້ງປະຕິບັດວຽກງານມະນຸດສະທຳ ທີ່ມີການເຂົ້າຮ່ວມຂອງສັງຄົມ ດັ່ງນີ້:

1. ການຊ່ວຍເຫຼືອບັນເທົາທຸກເບື້ອງຕົ້ນ;
2. ການປຸກລະດົມຂົນຂວາຍບໍລິຈາກເລືອດ ແລະ ການສະໜອງເລືອດທີ່ປອດໄພ;
3. ການສົ່ງເສີມສຸຂະພາບຂັ້ນພື້ນຖານ;
4. ການປະຖົມພະຍາບານ;
5. ການກູ້ໄພສຸກເສີນ;
6. ການໂຄສະນາ ຂົນຂວາຍແຫຼ່ງທຶນ;
7. ການສ້າງສະມາຊິກ ແລະ ອາສາສະໝັກກາແດງ;
8. ການສືບຫາວຫາຍາດພີ່ນ້ອງ;
9. ການພົວພັນ ແລະ ຮ່ວມມືສາກົນ.

**ມາດຕາ 9 ການຊ່ວຍເຫຼືອບັນເທົາທຸກເບື້ອງຕົ້ນ**

ການຊ່ວຍເຫຼືອບັນເທົາທຸກເບື້ອງຕົ້ນ ແມ່ນ ການຊ່ວຍເຫຼືອທາງດ້ານວັດຖຸ ແລະ ຈິດໃຈຂັ້ນພື້ນຖານ, ລວມທັງ ການໃຫ້ຄວາມຮູ້ພື້ນຖານ ເພື່ອສ້າງຄວາມເຂັ້ມແຂງໃຫ້ຊຸມຊົນ ກ່ຽວກັບວຽກງານປ້ອງກັນ, ຫຼຸດຜ່ອນຄວາມສ່ຽງ ແລະ ຮັບມືກັບໄພພິບັດ.

ເປົ້າໝາຍຂອງການຊ່ວຍເຫຼືອບັນເທົາທຸກເບື້ອງຕົ້ນ ແມ່ນ ຜູ້ທີ່ຖືກຜົນກະທົບຈາກໄພພິບັດ, ຜູ້ທຸກຍາກຂາດເຂີນ, ປ່ຽວພອຍ, ດ້ອຍໂອກາດ, ກຳພ້າ, ກຳພອຍ, ຄົນພິການ ແລະ ຜູ້ຢູ່ເຂດຫ່າງໄກສອກຫຼີກ.

**ມາດຕາ 10 ການປຸກລະດົມຂົນຂວາຍບໍລິຈາກເລືອດ ແລະ ການສະໜອງເລືອດທີ່ປອດໄພ**

ການປຸກລະດົມຂົນຂວາຍ ບໍລິຈາກເລືອດ ແລະ ການສະໜອງເລືອດທີ່ປອດໄພ ແມ່ນ ຂະບວນການຈັດຫາຜູ້ບໍລິຈາກເລືອດແບບສະໝັກໃຈ, ຮັບການບໍລິຈາກເລືອດ, ກວດກາວິເຄາະເລືອດ, ເກັບຮັກສາ, ຄຸ້ມຄອງຄຸນນະພາບ ແລະ ການສະໜອງເລືອດໃຫ້ພຽງພໍ, ປອດໄພ ແລະ ທັນເວລາ.

**ມາດຕາ 11 ການສົ່ງເສີມສຸຂະພາບຂັ້ນພື້ນຖານ**

ການສົ່ງເສີມສຸຂະພາບຂັ້ນພື້ນຖານ ແມ່ນ ການເຮັດໃຫ້ປະຊາຊົນຜູ້ດ້ອຍໂອກາດ, ຊຸມຊົນ, ເຂດຫ່າງໄກສອກຫຼີກ ໄດ້ເຂົ້າເຖິງນໍ້າສະອາດ, ສຸຂາພິບານ, ອະນາໄມ, ໂພຊະນາການ, ສຸຂະພາບແມ່ ແລະ ເດັກ ດ້ວຍການໂຄສະນາສຸຂະສຶກສາ, ການຝຶກອົບຮົມການປະຖົມພະຍາບານ ຕາມນະໂຍບາຍຂອງກະຊວງສາທາລະນະສຸກ ເພື່ອເຮັດໃຫ້ປະຊາຊົນມີສຸຂະພາບ ແລະ ຊີວິດການເປັນຢູ່ທີ່ດີ.

**ມາດຕາ 12 ການປະຖົມພະຍາບານ**

ການປະຖົມພະຍາບານ ແມ່ນ ການຊ່ວຍເຫຼືອເບື້ອງຕົ້ນ ແກ່ຜູ້ຖືກເຄາະຮ້າຍທີ່ໄດ້ຮັບບາດເຈັບ ທາງດ້ານຮ່າງກາຍ ແລະ/ຫຼື ຈິດໃຈ ໂດຍນໍາໃຊ້ອັດຖູປະກອນທີ່ມີຢູ່ອ້ອມຂ້າງ ຢ່າງຖືກວິທີ ຈົນກວ່າຈະນໍາສົ່ງເຖິງສະຖານທີ່ບໍລິການດ້ານການແພດ.

ຜູ້ທີ່ຈະໃຫ້ການຊ່ວຍເຫຼືອປະຖົມພະຍາບານ ຕ້ອງໄດ້ຮັບການຝຶກອົບຮົມ ທາງດ້ານປະຖົມພະຍາບານ.

**ມາດຕາ 13 ການກູ້ໄພສຸກເສີນ**

ການກູ້ໄພສຸກເສີນ ແມ່ນ ການຊ່ວຍເຫຼືອຮີບດ່ວນ ເພື່ອກອບກູ້ຜູ້ຖືກເຄາະຮ້າຍ ຈາກໄພທໍາມະຊາດ ຫຼື ມະນຸດສ້າງຂຶ້ນ ເຊັ່ນ ອຸບປະຕິເຫດທາງຖະໜົນ, ທາງອາກາດ, ທາງນໍ້າ, ອຸທົກກະໄພ, ອັກຄີໄພ, ວາຕະໄພ, ດິນເຈື່ອນ, ຕຶກຖະຫຼົ່ມ, ແຜ່ນດິນໄຫວ, ພະຍາດລະບາດ.

**ມາດຕາ 14 ການໂຄສະນາຂົນຂວາຍແຫຼ່ງທຶນ**

ການໂຄສະນາຂົນຂວາຍແຫຼ່ງທຶນ ແມ່ນ ການເຮັດໃຫ້ສັງຄົມຮູ້, ເຂົ້າໃຈ ພາລະບົດບາດ, ຄວາມສໍາຄັນ, ຜົນງານການເຄື່ອນໄຫວວຽກງານກາແດງລາວໃນແຕ່ລະໄລຍະ ໂດຍຜ່ານສື່ ແລະ ກິດຈະກໍາຕ່າງໆ ເພື່ອໃຫ້ມີຄວາມສະໝັກໃຈປະກອບສ່ວນທຶນຮອນເຂົ້າໃນວຽກງານກາແດງລາວ.

**ມາດຕາ 15 ການສ້າງສະມາຊິກ ແລະ ອາສາສະໝັກກາແດງ**

ການສ້າງສະມາຊິກ ແລະ ອາສາສະໝັກກາແດງ ແມ່ນ ການປຸກລະດົມຂົນຂວາຍ, ສຶກສາອົບຮົມ, ຝຶກອົບຮົມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ເຂົ້າເປັນສະມາຊິກ ແລະ ອາສາສະໝັກກາແດງ ເພື່ອປະກອບສ່ວນເຂົ້າໃນການເຄື່ອນໄຫວວຽກງານກາແດງລາວ.

ສໍາລັບເງື່ອນໄຂ ແລະ ມາດຕະຖານ ຂອງສະມາຊິກ ແລະ ອາສາສະໝັກກາແດງ ໄດ້ກໍານົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 16 ການສືບຫາວຫາຍາດພີ່ນ້ອງ**

ການສືບຫາວຫາຍາດພີ່ນ້ອງ ແມ່ນ ການເປັນສື່ກາງໃນການຕິດຕໍ່ພົວພັນຫາ ບຸກຄົນ, ກຸ່ມຄົນ ທີ່ບໍ່ສາມາດຕິດຕໍ່ພົວພັນກັນໄດ້ ເນື່ອງຈາກໄພພິບັດ, ການຍົກຍ້າຍຖິ່ນຖານ, ການອົບພະຍົບ, ສົງຄາມ ແລະ ອື່ນໆ ໃຫ້ຮູ້ຂ່າວຄາວ ຫຼື ກັບມາຢູ່ຮ່ວມກັນອີກ.

**ມາດຕາ 17 ການພົວພັນ ແລະ ຮ່ວມມືສາກົນ**

ອົງການກາແດງລາວ ພົວພັນ ແລະ ຮ່ວມມືສາກົນ ກ່ຽວກັບວຽກງານກາແດງ ດ້ວຍການອອກແຮງ ຊອກຮູ້ບົດຮຽນທີ່ເປັນປະໂຫຍດ, ຂົນຂວາຍແຫຼ່ງທຶນ, ວັດຖຸປະກອນ, ເຕັກນິກ ແລະ ການພັດທະນາບຸກຄະລາກອນ ເພື່ອນຳໃຊ້ເຂົ້າໃນວຽກງານຂອງຕົນ ໃຫ້ມີປະສິດທິພາບ ລວມທັງການປະຕິບັດພັນທະຂອງຕົນຕໍ່ສາກົນ.

ອົງການຈັດຕັ້ງສາກົນ, ອົງການກາແດງຂອງຕ່າງປະເທດ ແລະ ຄົນຕ່າງປະເທດ ຈະສາມາດເຄື່ອນໄຫວວຽກງານກາແດງ ຢູ່ ສປປ ລາວ ໄດ້ກໍຕໍ່ເມື່ອໄດ້ຮັບອະນຸຍາດຈາກລັດຖະບານຂອງ ສປປ ລາວ ແລະ ຕ້ອງປະຕິບັດຕາມກົດໝາຍ ແລະ ຮີດຄອງປະເພນີ ຂອງ ສປປ ລາວ.

ລັດຖະບານ ແຫ່ງ ສປປ ລາວ ສະໜັບສະໜູນ ແລະ ອຳນວຍຄວາມສະດວກ ໃຫ້ອົງການກາແດງລາວ ເຂົ້າຮ່ວມການຊ່ວຍເຫຼືອກູ້ໄພ ໃນລະດັບພາກພື້ນ ແລະ ສາກົນ ບົນພື້ນຖານຂະບວນການກາແດງ ແລະ ຊີກວົງເດືອນແດງສາກົນ, ກົດໝາຍ ແລະ ຮີດຄອງປະເພນີຂອງປະເທດທີ່ກ່ຽວຂ້ອງ.

**ມາດຕາ 18 ອົງການຈັດຕັ້ງປະຕິບັດວຽກງານກາແດງ**

ອົງການຈັດຕັ້ງປະຕິບັດວຽກງານກາແດງ ປະກອບດ້ວຍ ອົງການກາແດງລາວ ແລະ ອົງການປະສານສົມທົບວຽກງານກາແດງ.

## ພາກທີ III
## ອົງການກາແດງລາວ

### ໝວດທີ 1
### ທີ່ຕັ້ງ, ພາລະບົດບາດ, ສິດ ແລະ ໜ້າທີ່ ຂອງອົງການກາແດງລາວ

**ມາດຕາ 19 ທີ່ຕັ້ງຂອງອົງການກາແດງລາວ**

ອົງການກາແດງລາວ ແມ່ນ ການຈັດຕັ້ງທາງສັງຄົມຂອງ ສປປ ລາວ ທີ່ເຄື່ອນໄຫວວຽກງານມະນຸດສະທຳ ຢ່າງເປັນເອກະລາດ ຢູ່ພາຍໃຕ້ ລັດຖະທຳມະນູນ, ກົດໝາຍ ແລະ ເຈັດຫຼັກການພື້ນຖານຂອງຂະບວນການກາແດງ ແລະ ຊີກວົງເດືອນແດງສາກົນ.

**ມາດຕາ 20 ພາລະບົດບາດຂອງອົງການກາແດງລາວ**

ອົງການກາແດງລາວ ມີພາລະບົດບາດ ໃນການຈັດຕັ້ງປະຕິບັດວຽກງານກາແດງ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 8 ຂອງກົດໝາຍສະບັບນີ້ ດ້ວຍການຮ່ວມມື ຈາກອົງການປະສານສົມທົບວຽກງານກາແດງ ເພື່ອສ້າງ ແລະ ສົ່ງເສີມຄຸນຄ່າດ້ານມະນຸດສະທຳ ໂດຍບໍ່ຈຳແນກການປະຕິບັດ.

**ມາດຕາ 21 ສິດ ແລະ ໜ້າທີ່ ຂອງອົງການກາແດງລາວ**

ອົງການກາແດງລາວ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຈັດຕັ້ງປະຕິບັດວຽກງານກາແດງ ແລະ ວຽກງານມະນຸດສະທຳ;

2. ໂຄສະນາ ເຜີຍແຜ່ ວຽກງານກາແດງ, ວຽກງານມະນຸດສະທຳ, ເຈັດຫຼັກການພື້ນຖານຂອງຂະບວນການກາແດງ ແລະ ຊີກອົງເດືອນແດງສາກົນ ແລະ ກົດໝາຍມະນຸດສະທຳສາກົນ;

3. ຂົນຂວາຍ, ສ້າງ, ຂະຫຍາຍ ສະມາຊິກ ແລະ ອາສາສະໝັກ ເຂົ້າຮ່ວມການຈັດຕັ້ງ ແລະ ເຄື່ອນໄຫວວຽກງານກາແດງ ເພື່ອກະກຽມເງື່ອນໄຂໃນການສ້າງຕັ້ງເປັນສະພາກາແດງລາວ;

4. ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງສະມາຊິກ ແລະ ອາສາສະໝັກກາແດງ;

5. ຄຸ້ມຄອງກອງທຶນ, ເປີດບັນຊີຮັບເອົາການບໍລິຈາກ, ຄຸ້ມຄອງ ບໍລິຫານ ເງິນຝາກ ແລະ ດອກເບ້ຍຢູ່ທະນາຄານ ເພື່ອນຳໃຊ້ເຂົ້າໃນການເຄື່ອນໄຫວວຽກງານກາແດງ;

6. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຂອງຂັ້ນເທິງ.

## ໝວດທີ 2
## ໂຄງປະກອບຂອງອົງການກາແດງລາວ

**ມາດຕາ 22 ໂຄງປະກອບການຈັດຕັ້ງ**

ໂຄງປະກອບການຈັດຕັ້ງຂອງອົງການກາແດງລາວ ມີ ສອງ ຂັ້ນ ຄື:

1. ອົງການກາແດງລາວ ຂັ້ນສູນກາງ;

2. ອົງການກາແດງລາວ ຂັ້ນທ້ອງຖິ່ນ.

ໂຄງປະກອບກົງຈັກການຈັດຕັ້ງ ຂອງອົງການກາແດງລາວແຕ່ລະຂັ້ນ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 23 ໂຄງປະກອບບຸກຄະລາກອນ**

ໂຄງປະກອບບຸກຄະລາກອນ ຂອງອົງການກາແດງລາວ ປະກອບດ້ວຍ ປະທານ, ຮອງປະທານ ແລະພະນັກງານ-ລັດຖະກອນ ຊຶ່ງໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

ອົງການກາແດງລາວ ມີ ປະທານກິດຕິມະສັກ, ຜູ້ຊົງຄຸນວຸດທິ, ສະມາຊິກ ແລະ ອາສາສະໝັກກາແດງ.

## ໝວດທີ 3
## ປະທານກິດຕິມະສັກອົງການກາແດງລາວ ແລະ ຜູ້ຊົງຄຸນວຸດທິກາແດງ

**ມາດຕາ 24 ປະທານກິດຕິມະສັກອົງການກາແດງລາວ**

ປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນ ປະທານກິດຕິມະສັກຂອງອົງການກາແດງລາວ.

**ມາດຕາ 25 ຜູ້ຊົງຄຸນວຸດທິກາແດງ**

ຜູ້ຊົງຄຸນວຸດທິກາແດງ ແມ່ນ ຜູ້ທີ່ມີບົດບາດ, ຊື່ສຽງທາງດ້ານ ການເມືອງ, ເສດຖະກິດ, ສັງຄົມ ຂອງປະເທດ, ສະໝັກໃຈເຮັດວຽກເພື່ອສັງຄົມໂດຍບໍ່ຮຽກຮ້ອງສິ່ງຕອບແທນ ເປັນຕົ້ນ ນັກການເມືອງ, ນັກການທູດ, ນັກທຸລະກິດ, ນັກການແພດ, ສິລະປິນ, ນັກສັງຄົມສົງເຄາະ.

## ໝວດທີ 4
## ສະມາຊິກ ແລະ ອາສາສະໝັກ ກາແດງ

**ມາດຕາ 26 ສະມາຊິກກາແດງ**

ສະມາຊິກກາແດງ ແມ່ນ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຄວາມຕື່ນຕົວ, ສະໝັກໃຈ ເຂົ້າເປັນສະມາຊິກກາແດງ ຊຶ່ງໄດ້ຮັບການຂຶ້ນທະບຽນ ແລະ ຢັ້ງຢືນຈາກອົງການກາແດງລາວ.

**ມາດຕາ 27 ສິດ ແລະ ພັນທະຂອງສະມາຊິກກາແດງ**

ສະມາຊິກກາແດງ ມີ ສິດ ແລະ ພັນທະ ດັ່ງນີ້:

1. ເຂົ້າຮ່ວມການເຄື່ອນໄຫວວຽກງານກາແດງ;
2. ເຂົ້າຮ່ວມກອງປະຊຸມສໍາມະນາ, ການຝຶກອົບຮົມ ແລະ ການແລກປ່ຽນບົດຮຽນ ກ່ຽວກັບວຽກງານກາແດງ;
3. ໂຄສະນາ ເຜີຍແຜ່ ກົດໝາຍ ແລະ ລະບຽບການກ່ຽວກັບວຽກງານກາແດງ, ເຈັດຫຼັກການພື້ນຖານ ຂອງຂະບວນການກາແດງ ແລະ ຊີກວົງເດືອນແດງສາກົນ, ກົດໝາຍມະນຸດສະທໍາສາກົນ;
4. ປະກອບຄໍາເຫັນ ກ່ຽວກັບວຽກງານກາແດງ;
5. ປຸກຈິດສໍານຶກ ໃຫ້ຊຸມຊົນມີຄວາມຕື່ນຕົວ ຕໍ່ການປະກອບສ່ວນໃນວຽກງານກາແດງ;
6. ຈ່າຍເງິນບໍາລຸງ ໃຫ້ແກ່ອົງການກາແດງລາວ ຢ່າງເປັນປົກກະຕິ;
7. ນໍາໃຊ້ສິດ ແລະ ປະຕິບັດພັນທະອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

**ມາດຕາ 28 ຜົນປະໂຫຍດຂອງສະມາຊິກກາແດງ**

ສະມາຊິກກາແດງ ໄດ້ຮັບຜົນປະໂຫຍດ ດັ່ງນີ້:

1. ການຍົກລະດັບຄວາມຮູ້, ຄວາມສາມາດ ດ້ານວິຊາສະເພາະກາແດງ;
2. ຂໍ້ມູນ ຂ່າວສານ ກ່ຽວກັບວຽກງານກາແດງ;
3. ວັດຖຸປະກອນຮັບໃຊ້ ວຽກງານກາແດງ;
4. ການຍ້ອງຍໍ ຫຼື ນະໂຍບາຍອື່ນ ໃນກໍລະນີມີຜົນງານດີເດັ່ນໃນວຽກງານກາແດງ;
5. ການເບິ່ງແຍງສຸຂະພາບ ໃນກໍລະນີເຈັບປ່ວຍຈາກການເຄື່ອນໄຫວວຽກງານກາແດງ ດ້ວຍຮູບການຕ່າງໆ ຕາມກົດໝາຍ.

**ມາດຕາ 29 ການສິ້ນສຸດການເປັນສະມາຊິກກາແດງ**

ສະມາຊິກກາແດງ ສິ້ນສຸດລົງ ໃນກໍລະນີໃດໜຶ່ງ ດັ່ງນີ້:

1. ລາອອກ;

2. ຖືກໄລ່ອອກ ຫຼື ຖືກປົດຈາກການເປັນສະມາຊິກກາແດງ ຍ້ອນມີການລະເມີດກົດລະບຽບຂອງອົງການກາແດງລາວ ຢ່າງຮ້າຍແຮງ;

3. ເສຍຊີວິດ ຫຼື ລົ້ມລະລາຍ;

4. ກໍລະນີອື່ນ ທີ່ໄດ້ກໍານົດໄວ້ໃນກົດລະບຽບຂອງອົງການກາແດງລາວ.

**ມາດຕາ 30 ອາສາສະໝັກກາແດງ**

ອາສາສະໝັກກາແດງ ແມ່ນ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ມີຄວາມຕື່ນຕົວ, ສະໝັກໃຈ ເຂົ້າເປັນອາສາສະໝັກກາແດງ ຊຶ່ງໄດ້ຮັບການຂຶ້ນທະບຽນ ແລະ ຢັ້ງຢືນຈາກອົງການກາແດງລາວ.

**ມາດຕາ 31 ປະເພດອາສາສະໝັກກາແດງ**

ປະເພດອາສາສະໝັກກາແດງ ຕົ້ນຕໍ ມີ ດັ່ງນີ້:

1. ອາສາສະໝັກ ເຍົາວະຊົນກາແດງ;
2. ອາສາສະໝັກ ຊາວໜຸ່ມກາແດງ;
3. ອາສາສະໝັກ ອາວຸໂສກາແດງ;
4. ອາສາສະໝັກ ສະເພາະ ບໍລິຈາກເລືອດ ແລະ ກູ້ໄພສຸກເສີນກາແດງ.

**ມາດຕາ 32 ສິດ ແລະ ຜົນປະໂຫຍດຂອງອາສາສະໝັກກາແດງ**

ອາສາສະໝັກກາແດງ ມີ ສິດເຂົ້າຮ່ວມໃນການຈັດຕັ້ງປະຕິບັດວຽກງານກາແດງໃດໜຶ່ງ ຫຼື ທັງໝົດ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 8 ຂອງກົດໝາຍສະບັບນີ້.

ອາສາສະໝັກກາແດງ ໄດ້ຮັບຜົນປະໂຫຍດຄືກັນກັບສະມາຊິກກາແດງ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 28 ຂອງກົດໝາຍສະບັບນີ້.

**ມາດຕາ 33 ການສິ້ນສຸດການເປັນອາສາສະໝັກກາແດງ**

ອາສາສະໝັກກາແດງ ສິ້ນສຸດລົງ ຕາມກໍລະນີໃດໜຶ່ງ ດັ່ງນີ້

1. ລາອອກ;

2. ຖືກໄລ່ອອກ ຫຼື ຖືກປົດຈາກການເປັນອາສາສະໝັກກາແດງ ຍ້ອນມີການລະເມີດກົດລະບຽບຂອງອົງການກາແດງລາວ ຢ່າງຮ້າຍແຮງ;

3. ບໍ່ຕໍ່ອາຍຸການຂອງບັດອາສາສະໝັກກາແດງ;

4. ເສຍຊີວິດ ຫຼື ລົ້ມລະລາຍ;

5. ກໍລະນີອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດລະບຽບຂອງອົງການກາແດງລາວ.

## ໝວດທີ 5
## ກອງປະຊຸມກ່ຽວກັບວຽກງານກາແດງ

**ມາດຕາ 34 ກອງປະຊຸມກ່ຽວກັບວຽກງານກາແດງ**

ກອງປະຊຸມກ່ຽວກັບວຽກງານກາແດງ ເປີດຂຶ້ນ ປີລະຄັ້ງ, ໃນກໍລະນີມີຄວາມຈໍາເປັນ ແລະ ຮີບດ່ວນ ສາມາດເປີດຫຼາຍຄັ້ງກໍໄດ້ ໂດຍປະທານອົງການກາແດງລາວແຕ່ລະຂັ້ນ ເປັນຜູ້ຮຽກໂຮມ ແລະ ເປັນປະທານ.

**ມາດຕາ 35 ສິດ ແລະ ໜ້າທີ່ຂອງກອງປະຊຸມກ່ຽວກັບວຽກງານກາແດງ**

ກອງປະຊຸມກ່ຽວກັບວຽກງານກາແດງ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ຮັບຮອງເອົາ ບົດລາຍງານ ການເຄື່ອນໄຫວວຽກງານ ໃນປີຜ່ານມາ ແລະ ທິດທາງວຽກງານ ໃນປີຕໍ່ໄປ ຂອງອົງການກາແດງລາວຂັ້ນຂອງຕົນ;
2. ຄົ້ນຄວ້າ, ປະກອບຄໍາເຫັນຕໍ່ວຽກງານໃດໜຶ່ງ ຕາມທີ່ໄດ້ກໍານົດໄວ້ໃນແຜນການດໍາເນີນງານຂອງອົງການກາແດງລາວຂັ້ນຂອງຕົນ;
3. ພິຈາລະນາ ແລະ ຮັບຮອງເອົາມະຕິກອງປະຊຸມ ຂອງອົງການກາແດງລາວຂັ້ນຂອງຕົນ;
4. ພິຈາລະນາ ແລະ ຮັບຮອງເອົາ ວຽກງານອື່ນທີ່ຈໍາເປັນ.

**ມາດຕາ 36 ມະຕິກອງປະຊຸມ**

ມະຕິກອງປະຊຸມ ແມ່ນ ເອກະສານທີ່ສັງລວມບັນຫາສໍາຄັນຕ່າງໆ ທີ່ກອງປະຊຸມໄດ້ຕົກລົງຮັບຮອງເອົາ.

ມະຕິກອງປະຊຸມ ຈະມີຄຸນຄ່າໄດ້ກໍຕໍ່ເມື່ອ ໄດ້ຮັບຄະແນນສຽງຫຼາຍກວ່າເຄິ່ງໜຶ່ງ ຂອງຜູ້ແທນທີ່ເຂົ້າຮ່ວມກອງປະຊຸມ.

## ພາກທີ IV
## ອົງການປະສານສົມທົບວຽກງານກາແດງ

**ມາດຕາ 37 ອົງການປະສານສົມທົບວຽກງານກາແດງ**

ອົງການປະສານສົມທົບວຽກງານກາແດງ ມີ ດັ່ງນີ້:

1. ກະຊວງແຮງງານ ແລະ ສະຫວັດດີການສັງຄົມ;
2. ກະຊວງສາທາລະນະສຸກ;
3. ກະຊວງສຶກສາທິການ ແລະ ກິລາ;
4. ກະຊວງຖະແຫຼງຂ່າວ ວັດທະນະທໍາ ແລະ ທ່ອງທ່ຽວ;
5. ກະຊວງການຕ່າງປະເທດ;
6. ກະຊວງປ້ອງກັນປະເທດ;
7. ກະຊວງປ້ອງກັນຄວາມສະຫງົບ;
8. ກະຊວງພາຍໃນ;

9. ກະຊວງການເງິນ;

10. ແນວລາວສ້າງຊາດ ແລະ ອົງການຈັດຕັ້ງມະຫາຊົນຂັ້ນສູນກາງ;

11. ກະຊວງ, ອົງການອື່ນ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ.

**ມາດຕາ 38 ກະຊວງແຮງງານ ແລະ ສະຫວັດດີການສັງຄົມ**

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ມີໜ້າທີ່ໃຫ້ການປຶກສາຫາລື, ປະສານສົມທົບ, ສະໜອງຂໍ້ມູນ ຂ່າວສານ, ປະກອບສ່ວນທາງດ້ານວັດຖຸສິ່ງຂອງ, ເຕັກນິກ ວິຊາການ ແລະ ບຸກຄະລາກອນ ເຂົ້າໃນວຽກງານຊ່ວຍເຫຼືອບັນເທົາທຸກສຸກເສີນເບື້ອງຕົ້ນ ໃນເວລາເກີດໄພພິບັດ.

**ມາດຕາ 39 ກະຊວງສາທາລະນະສຸກ**

ກະຊວງສາທາລະນະສຸກ ມີໜ້າທີ່ໃຫ້ການປຶກສາຫາລື, ປະສານສົມທົບ, ສະໜອງ ແລະ ແລກປ່ຽນຂໍ້ມູນ ຂ່າວສານ, ເຕັກນິກ ວິຊາການ ໃນວຽກງານປຸກລະດົມຂົນຂວາຍບໍລິຈາກເລືອດ ແລະ ສະໜອງເລືອດທີ່ປອດໄພ, ສົ່ງເສີມສຸຂະພາບຂັ້ນພື້ນຖານ, ການປະຖົມພະຍາບານ, ການດູແລສຸຂະພາບ ແລະ ວຽກງານນໍ້າສະອາດ, ສຸຂາພິບານ, ອະນາໄມ ຂອງຜູ້ປະສົບໄພພິບັດ, ຜູ້ທຸກຍາກ, ຜູ້ດ້ອຍໂອກາດ ເປັນຕົ້ນ ຢູ່ເຂດຫ່າງໄກສອກຫຼີກ.

**ມາດຕາ 40 ກະຊວງສຶກສາທິການ ແລະ ກິລາ**

ກະຊວງສຶກສາທິການ ແລະ ກິລາ ມີໜ້າທີ່ໃຫ້ການສະໜັບສະໜູນ, ປຶກສາຫາລື, ປະສານສົມທົບ, ແລກປ່ຽນຂໍ້ມູນ ຂ່າວສານ ແລະ ເຂົ້າຮ່ວມການເຄື່ອນໄຫວວຽກງານກາແດງ.

**ມາດຕາ 41 ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ**

ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ມີໜ້າທີ່ໃຫ້ການປຶກສາຫາລື, ປະສານສົມທົບ, ແລກປ່ຽນຂໍ້ມູນ ຂ່າວສານ, ໂຄສະນາ, ປຸກລະດົມຂົນຂວາຍ ທຸກຊັ້ນຄົນໃນສັງຄົມ ເຂົ້າຮ່ວມ ແລະ ປະກອບສ່ວນໃນຂະບວນການເຄື່ອນໄຫວວຽກງານກາແດງ.

**ມາດຕາ 42 ກະຊວງການຕ່າງປະເທດ**

ກະຊວງການຕ່າງປະເທດ ມີໜ້າທີ່ໃຫ້ການປຶກສາຫາລື, ປະສານສົມທົບ, ອຳນວຍຄວາມສະດວກ, ແນະນຳລະບຽບການ, ຂັ້ນຕອນການພົວພັນ ແລະ ຮ່ວມມືສາກົນກ່ຽວກັບການເຄື່ອນໄຫວວຽກງານກາແດງ.

**ມາດຕາ 43 ກະຊວງປ້ອງກັນປະເທດ**

ກະຊວງປ້ອງກັນປະເທດ ມີໜ້າທີ່ໃຫ້ການສະໜັບສະໜູນ, ປຶກສາຫາລື, ປະສານສົມທົບ, ແລກປ່ຽນຂໍ້ມູນ ຂ່າວສານ ແລະ ເຂົ້າຮ່ວມການເຄື່ອນໄຫວວຽກງານກາແດງ ໃນການປຸກລະດົມຂົນຂວາຍ, ບໍລິຈາກເລືອດ, ກູ້ໄພສຸກເສີນ, ໃຫ້ການຮ່ວມມື ແລະ ຊຸກຍູ້ການປະຕິບັດກົດໝາຍມະນຸດສະທຳສາກົນ.

**ມາດຕາ 44 ກະຊວງປ້ອງກັນຄວາມສະຫງົບ**

ກະຊວງປ້ອງກັນຄວາມສະຫງົບ ມີໜ້າທີ່ໃຫ້ການສະໜັບສະໜູນ, ປຶກສາຫາລື, ປະສານສົມທົບ, ແລກປ່ຽນຂໍ້ມູນ ຂ່າວສານ ແລະ ເຂົ້າຮ່ວມການເຄື່ອນໄຫວອົງການກາແດງ ໃນການປຸກລະດົມຂົນຂວາຍ, ບໍລິຈາກເລືອດ, ກູ້ໄພສຸກເສີນ, ອຸບປະຕິເຫດທາງຖະໜົນ, ອັກຄີໄພ, ໃຫ້ການຮ່ວມມື ແລະ ຊຸກຍູ້ການປະຕິບັດກົດໝາຍມະນຸດສະທຳສາກົນ.

**ມາດຕາ 45 ກະຊວງພາຍໃນ**

ກະຊວງພາຍໃນ ມີໜ້າທີ່ໃຫ້ການສະໜັບສະໜູນ, ປຶກສາຫາລື, ປະສານສົມທົບ, ແລກປ່ຽນຂໍ້ມູນ ຂ່າວສານ ແລະ ເຂົ້າຮ່ວມໃນການເຄື່ອນໄຫວອົງການກາແດງ ເປັນຕົ້ນ ການຄຸ້ມຄອງພະນັກງານ-ລັດຖະກອນ, ສະມາຊິກ, ອາສາສະໝັກກາແດງ ລວມທັງການປະຕິບັດນະໂຍບາຍຍ້ອງຍໍ.

**ມາດຕາ 46 ກະຊວງການເງິນ**

ກະຊວງການເງິນ ມີ ໜ້າທີ່ ໃຫ້ການສະໜັບສະໜູນ, ປຶກສາຫາລື, ປະສານສົມທົບ ແລະ ເຂົ້າຮ່ວມໃນການເຄື່ອນໄຫວອົງການກາແດງ ເປັນຕົ້ນ ການຈັດສັນງົບປະມານ, ການຄຸ້ມຄອງການນຳໃຊ້ ລາຍຮັບ-ລາຍຈ່າຍ ຂອງອົງການກາແດງລາວ.

**ມາດຕາ 47 ແນວລາວສ້າງຊາດ ແລະ ອົງການຈັດຕັ້ງມະຫາຊົນຂັ້ນສູນກາງ**

ແນວລາວສ້າງຊາດ ແລະ ອົງການຈັດຕັ້ງມະຫາຊົນຂັ້ນສູນກາງ ມີໜ້າທີ່ໃຫ້ການສະໜັບສະໜູນ, ປຶກສາຫາລື, ປະສານສົມທົບ, ແລກປ່ຽນຂໍ້ມູນ ຂ່າວສານ, ໂຄສະນາ, ປຸກລະດົມຂົນຂວາຍທົ່ວສັງຄົມ ແລະ ອົງການຈັດຕັ້ງຂອງຕົນ ເຂົ້າຮ່ວມການເຄື່ອນໄຫວອົງການກາແດງ.

**ມາດຕາ 48 ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ**

ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ມີໜ້າທີ່ໃຫ້ການຮ່ວມມື, ປະສານສົມທົບ, ສະໜອງ, ແລກປ່ຽນຂໍ້ມູນ ຂ່າວສານ, ອຳນວຍຄວາມສະດວກ ແລະ ປະກອບສ່ວນເຂົ້າໃນການເຄື່ອນໄຫວອົງການກາແດງ.

## ພາກທີ V
## ການເງິນຮັບໃຊ້ອົງການກາແດງ

**ມາດຕາ 49 ແຫຼ່ງລາຍຮັບ**

ແຫຼ່ງລາຍຮັບ ເພື່ອຮັບໃຊ້ອົງການກາແດງ ມີ ດັ່ງນີ້:

1. ການຊ່ວຍເຫຼືອຂອງບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ, ອົງການຈັດຕັ້ງສາກົນ ທັງພາຍໃນ ແລະ ຕ່າງປະເທດ;
2. ເງິນບຳລຸງຂອງສະມາຊິກກາແດງ;
3. ການປະກອບສ່ວນຂອງລັດ;
4. ການເຄື່ອນໄຫວກິດຈະກຳທີ່ຖືກຕ້ອງຕາມກົດໝາຍ;

5. ດອກເບ້ຍເງິນຝາກ;

6. ລາຍຮັບອື່ນ ທີ່ຖືກຕ້ອງຕາມກົດໝາຍ.

ລັດ ອະນຸຍາດໃຫ້ສ້າງຕັ້ງ ກອງທຶນຊ່ວຍເຫຼືອສຸກເສີນ ເພື່ອໃຫ້ການຊ່ວຍເຫຼືອສຸກເສີນ ໃນກໍລະນີເກີດມີໄພພິບັດ ແລະ ກອງທຶນເລືອດ ເພື່ອຮັບໃຊ້ວຽກງານປຸກລະດົມຂົນຂວາຍບໍລິຈາກເລືອດ ແລະ ສະໜອງເລືອດທີ່ປອດໄພ.

ການສ້າງຕັ້ງ, ຄຸ້ມຄອງ ແລະ ນຳໃຊ້ກອງທຶນດັ່ງກ່າວ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 50 ເປົ້າໝາຍການນຳໃຊ້ແຫຼ່ງລາຍຮັບ**

ອົງການກາແດງລາວ ນຳໃຊ້ແຫຼ່ງລາຍຮັບ ເຂົ້າໃນເປົ້າໝາຍ ດັ່ງນີ້:

1. ວຽກງານ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 8 ຂອງກົດໝາຍສະບັບນີ້;
2. ການບໍລິຫານ ແລະ ການສົ່ງເສີມອາຊີບການຂອງອົງການກາແດງລາວ;
3. ການປະຕິບັດນະໂຍບາຍຍ້ອງຍໍ, ປິ່ນປົວສຸຂະພາບ ແລະ ການເສຍຊີວິດ ຂອງສະມາຊິກ, ອາສາສະໝັກກາແດງ ຕາມກົດໝາຍ;
4. ພັນທະຂອງການເປັນສະມາຊິກຂອງອົງການກາແດງສາກົນ;
5. ເປົ້າໝາຍອື່ນທີ່ຈຳເປັນ ຕາມກົດໝາຍ.

**ມາດຕາ 51 ການຄຸ້ມຄອງງົບປະມານ, ລາຍຮັບ-ລາຍຈ່າຍ**

ອົງການກາແດງລາວແຕ່ລະຂັ້ນ ຄຸ້ມຄອງງົບປະມານ, ລາຍຮັບ-ລາຍຈ່າຍຂອງຕົນ ຕາມລະບອບບັນຊີລາຍຮັບ-ລາຍຈ່າຍ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍງົບປະມານແຫ່ງລັດ.

## ພາກທີ VI
## ຂໍ້ຫ້າມ

**ມາດຕາ 52 ຂໍ້ຫ້າມສຳລັບພະນັກງານ-ລັດຖະກອນຂອງອົງການກາແດງລາວ**

ຫ້າມ ພະນັກງານ-ລັດຖະກອນ ຂອງອົງການກາແດງລາວ ມີ ພຶດຕິກຳ ດັ່ງນີ້:

1. ສວຍໃຊ້ໜ້າທີ່, ຕຳແໜ່ງ, ຄວາມຮັບຜິດຊອບຂອງຕົນ ເພື່ອຫາຜົນປະໂຫຍດສ່ວນຕົວ, ຄອບຄົວ ແລະ ພັກພວກ;
2. ເມີນເສີຍຕໍ່ການປະຕິບັດໜ້າທີ່ຂອງຕົນ;
3. ໃຫ້ ຫຼື ຮັບ ສິນບົນ;
4. ໂຄສະນາ ໃສ່ຮ້າຍປ້າຍສີ ອົງການກາແດງລາວ;
5. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 53 ຂໍ້ຫ້າມສຳລັບສະມາຊິກ, ອາສາສະໝັກກາແດງ**

ຫ້າມ ສະມາຊິກ, ອາສາສະໝັກກາແດງ ມີ ພຶດຕິກຳ ດັ່ງນີ້:

1. ສວຍໃຊ້ໜ້າທີ່, ຕໍາແໜ່ງ, ຄວາມຮັບຜິດຊອບຂອງຕົນເພື່ອຫາຜົນປະໂຫຍດສ່ວນຕົວ, ຄອບຄົວ ແລະ ພັກພວກ;

2. ນໍາໃຊ້ເຄື່ອງໝາຍກາແດງ ໂດຍບໍ່ໄດ້ຮັບອະນຸຍາດ;

3. ຈັດຕັ້ງເປັນກຸ່ມກ້ອນ, ຊຸມນຸມ, ເຄື່ອນໄຫວ ແລະ ດໍາລົງຊີວິດ ທີ່ຂັດກັບກົດໝາຍ;

4. ເມີນເສີຍຕໍ່ການປະຕິບັດໜ້າທີ່ຂອງຕົນ;

5. ໂຄສະນາ ໃສ່ຮ້າຍປ້າຍສີ ອົງການກາແດງລາວ;

6. ມີພຶດຕິກໍາອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 54 ຂໍ້ຫ້າມສໍາລັບບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງອື່ນ**

ຫ້າມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງອື່ນ ມີ ພຶດຕິກໍາ ດັ່ງນີ້:

1. ສວຍໃຊ້ໜ້າທີ່, ຕໍາແໜ່ງ, ຄວາມຮັບຜິດຊອບຂອງຕົນ ເພື່ອຫາຜົນປະໂຫຍດສ່ວນຕົວ, ຄອບຄົວ ແລະ ພັກພວກ;

2. ນໍາໃຊ້ເຄື່ອງໝາຍກາແດງ ໂດຍບໍ່ໄດ້ຮັບອະນຸຍາດ;

3. ຂັດຂວາງ, ເມີນເສີຍ ແລະ ບໍ່ໃຫ້ການຮ່ວມມື;

4. ໃຫ້ ຫຼື ຮັບສິນບົນ;

5. ໂຄສະນາ ໃສ່ຮ້າຍປ້າຍສີອົງການກາແດງລາວ;

6. ມີພຶດຕິກໍາອື່ນ ທີ່ເປັນການລະເມີດກົດໝາຍ.

## ພາກທີ VII
## ການຄຸ້ມຄອງ ແລະ ການກວດກາວຽກງານກາແດງ

**ມາດຕາ 55 ການຄຸ້ມຄອງວຽກງານກາແດງ**

ລັດຖະບານ ເປັນຜູ້ຄຸ້ມຄອງວຽກງານກາແດງຢ່າງລວມສູນ ເປັນເອກະພາບ ໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ອົງການກາແດງລາວ ເປັນຜູ້ຮັບຜິດຊອບໂດຍກົງ ແລະ ເປັນເຈົ້າການປະສານສົມທົບ ກັບກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ.

**ມາດຕາ 56 ອົງການກວດກາວຽກງານກາແດງ**

ອົງການກວດກາວຽກງານກາແດງ ມີ ດັ່ງນີ້:

1. ອົງການກວດກາພາຍໃນ ຊຶ່ງແມ່ນ ອົງການດຽວກັນກັບ ອົງການຄຸ້ມຄອງວຽກງານກາແດງ ຕາມທີ່ໄດ້ກໍານົດໄວ້ໃນ ມາດຕາ 55 ຂອງກົດໝາຍສະບັບນີ້;

2. ອົງການກວດກາພາຍນອກ ຊຶ່ງແມ່ນ ສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ, ອົງການກວດກາລັດ, ອົງການກວດສອບແຫ່ງລັດ, ແນວລາວສ້າງຊາດ ແລະ ອົງການຈັດຕັ້ງມະຫາຊົນ.

**ມາດຕາ 57 ເນື້ອໃນການກວດກາວຽກງານກາແດງ**

ການກວດກາວຽກງານກາແດງ ມີເນື້ອໃນ ດັ່ງນີ້:

1. ການປະຕິບັດ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ກ່ຽວກັບວຽກງານກາແດງ;

2. ການປະຕິບັດພາລະບົດບາດ, ສິດ, ໜ້າທີ່, ຄວາມຮັບຜິດຊອບ, ແບບແຜນວິທີເຮັດວຽກ ຂອງ ພະນັກງານ-ລັດຖະກອນ, ສະມາຊິກ ແລະ ອາສາສະໝັກກາແດງ;

3. ການຄຸ້ມຄອງ, ການນໍາໃຊ້, ການປະຕິບັດນະໂຍບາຍ ຂອງອົງການກາແດງລາວ;

4. ການຄຸ້ມຄອງ, ການນໍາໃຊ້ ລາຍຮັບ-ລາຍຈ່າຍ ແລະ ຊັບສິນ ຮັບໃຊ້ວຽກງານກາແດງ.

**ມາດຕາ 58 ຮູບການການກວດກາວຽກງານກາແດງ**

ຮູບການການກວດກາວຽກງານກາແດງ ມີ ດັ່ງນີ້:

1. ການກວດກາຕາມປົກກະຕິ;
2. ການກວດກາໂດຍແຈ້ງໃຫ້ຊາບລ່ວງໜ້າ;
3. ການກວດກາແບບກະທັນຫັນ.

ການກວດກາຕາມປົກກະຕິ ແມ່ນ ການກວດກາ ຕາມແຜນການຢ່າງເປັນປະຈໍາ ແລະ ມີກໍານົດເວລາ ອັນແນ່ນອນຂອງຄະນະກວດກາແຕ່ລະຂັ້ນ.

ການກວດກາໂດຍແຈ້ງໃຫ້ຊາບລ່ວງໜ້າ ແມ່ນ ການກວດການອກແຜນການ ເມື່ອເຫັນວ່າມີຄວາມຈໍາ ເປັນ ໂດຍມີການແຈ້ງໃຫ້ເປົ້າໝາຍຖືກກວດກາຊາບລ່ວງໜ້າ.

ການກວດກາແບບກະທັນຫັນ ແມ່ນ ການກວດການອກແຜນ, ມີຄວາມຈໍາເປັນຮີບດ່ວນ ໂດຍບໍ່ໄດ້ ແຈ້ງໃຫ້ເປົ້າໝາຍຖືກກວດກາຊາບລ່ວງໜ້າ.

## ພາກທີ VIII
## ວັນກາແດງລາວ, ທຸງ, ເຄື່ອງໝາຍ, ກາໝາຍ, ເຄື່ອງແບບ ແລະ ຕາປະທັບ

**ມາດຕາ 59 ວັນກາແດງລາວ**

ວັນກາແດງລາວ ໃຫ້ຖືເອົາ ວັນທີ 1 ມັງກອນ 1955 ຊຶ່ງເປັນວັນສ້າງຕັ້ງອົງການກາແດງລາວ.

ລັດຖະບານ ກໍານົດເອົາ ວັນທີ 1 ມັງກອນ ຂອງທຸກໆປີ ເພື່ອສະເຫຼີມສະຫຼອງວັນດັ່ງກ່າວ.

**ມາດຕາ 60 ທຸງ, ເຄື່ອງໝາຍ, ກາໝາຍ ແລະ ເຄື່ອງແບບ**

ອົງການກາແດງລາວ ມີ ທຸງ, ເຄື່ອງໝາຍ, ກາໝາຍ ແລະ ເຄື່ອງແບບ ສະເພາະຂອງຕົນ ເພື່ອນໍາໃຊ້ ເຂົ້າ ໃນການເຄື່ອນໄຫວວຽກງານກາແດງ.

ທຸງ ຂອງອົງການກາແດງລາວ ມີ ພື້ນສີຂາວ, ມີເຄື່ອງໝາຍກາກະບາດສີແດງ ຢູ່ເຄິ່ງກາງ.

ເຄື່ອງໝາຍ ຂອງອົງການກາແດງລາວ ເປັນກາກະບາດສີແດງ, ພື້ນສີຂາວ, ມີຂອບວົງມົນສີແດງສອງ ຂອບ ອ້ອມກາກະບາດສີແດງ, ລະຫວ່າງສອງຂອບວົງມົນ ມີຕົວໜັງສືສີແດງ ຂຽນເປັນພາສາລາວ ແລະ ພາສາ ຕ່າງປະເທດ "ອົງການກາແດງລາວ CROIX-ROUGE LAO".

ກາໝາຍ ກາແດງ ແມ່ນ ກາກະບາດສີແດງ ພື້ນສີຂາວ.

ອົງການກາແດງລາວ ມີເຄື່ອງແບບສະເພາະຂອງຕົນ.

ຮູບແບບ, ລັກສະນະ ແລະ ຂະໜາດ ຂອງ ທຸງ, ເຄື່ອງໝາຍ, ກາໝາຍ ແລະ ເຄື່ອງແບບ ລະອຽດໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

ການຜະລິດ ແລະ ນຳໃຊ້ເຄື່ອງໝາຍຂອງອົງການກາແດງລາວ ແລະ ກາໝາຍກາແດງ ຕ້ອງໄດ້ຮັບອະນຸຍາດຈາກອົງການກາແດງລາວ.

**ມາດຕາ 61 ຕາປະທັບ**

ອົງການກາແດງລາວ ມີຕາປະທັບ ເພື່ອນຳໃຊ້ເຂົ້າໃນການເຄື່ອນໄຫວວຽກງານ ທາງລັດຖະການຂອງຕົນ.

## ພາກທີ IX
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 62 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນ ໃນການປະຕິບັດກົດໝາຍສະບັບນີ້ ເປັນຕົ້ນການບໍລິຈາກເລືອດ, ການກູ້ໄພສຸກເສີນ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນ ຕາມລະບຽບການ.

**ມາດຕາ 63 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ລະເມີດກົດໝາຍສະບັບນີ້ຈະຖືກ ສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ລົງໂທດທາງອາຍາ ຕາມແຕ່ກໍລະນີ ເບົາ ຫຼື ໜັກ.

## ພາກທີ X
## ບົດບັນຍັດສຸດທ້າຍ

**ມາດຕາ 64 ການຈັດຕັ້ງປະຕິບັດ**

ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

**ມາດຕາ 65 ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດ ນັບແຕ່ ວັນປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້ ແລະ ພາຍຫຼັງໄດ້ລົງໃນຈົດໝາຍເຫດທາງລັດຖະການ ສິບຫ້າວັນ.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບກົດໝາຍສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ປະທານສະພາແຫ່ງຊາດ

ປານີ ຢາທໍ່ຕູ້